ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ — ວັນທີ 26/10/2016

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
## ຄັ້ງທີ 3 ປະຈໍາປີ 2016, ວັນທີ 26/10/2016

ກອງປະຊຸມສະພາບໍລິຫານ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 3 ປະຈໍາປີ 2016 ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ຂອງວັນທີ 26/10/2016 ທີ່ສໍານັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ດຣ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງ ດັ່ງນີ້:**

1. ກອງປະຊຸມຮັບຊາບຕໍ່ຜົນການດໍາເນີນງານຂອງ ທຄຕລ ປະຈໍາ 9 ເດືອນ 2016, ຕາມລະບົບບັນຊີລາວກ່ອນການກວດສອບມີກໍາໄລລື່ນແຜນການປີ 20%.
2. ກອງປະຊຸມເຫັນດີນໍາສະເໜີເອົາບໍລິສັດ ເອີນແອນຢັງລາວຈໍາກັດ ເປັນຜູ້ກວດສອບ ທຄຕລ ປະຈໍາປີ 2017 ເພື່ອໃຫ້ກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2016 ພິຈາລະນາຮັບຮອງເອົາ.
3. ກອງປະຊຸມເຫັນດີຮັບຮອງການປັບປຸງລະບຽບວ່າດ້ວຍການປະຕິບັດນະໂຍບາຍ-ສະຫວັດດີການຕໍ່ພະນັກງານຕາມສັນຍາຂອງ ທຄຕລ ແລະ ການປະຕິບັດເງິນນະໂຍບາຍຕໍ່ພະນັກງານຂອງ ທຄຕລ.

ກອງປະຊຸມໄດ້ປິດລົງໃນເວລາ 16:30 ໂມງ ຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

ດຣ. ບຸນເຫຼືອ ສິນໄຊວໍຣະວົງ